พระคำพีสำลับຫຼານນ້ອຍ

ສະເໜີ

# ພຣະກຳເນີດ ຂອງພຣະເຢຊູ



ຂຽນໂດຍ: Edward Hughes
ແຕ້ມຮູບໂດຍ: M. Maillot
ດັດແກ້ໂດຍ: E. Frischbutter; Sarah S.
ແປໂດຍ: Christian Lingua
ຈັດພິມໂດຍ: Bible for Children
www.M1914.org

BFC
PO Box 3
Winnipeg, MB R3C 2G1
Canada

©2020 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ

ດົນນານມາແລ້ວ,
ພຣະເຈົ້າໄດ້ສົ່ງທູດສະຫວັນຄັບບຣີເອນໄປຫາ
ຍິງສາວພົມມະຈັນຊາວຢິວຄົນໜຶ່ງຊື່
ນາງ ມາຣີ. ພຣະອົງໄດ້ຊົງກ່າວແກ່ນາງວ່າ,
“ເຈົ້າຈະໃຫ້ກຳເນີດບຸດຊາຍ
ແລະຈົ່ງເອີ້ນນາມຊື່ເພິ່ນວ່າ ເຢຊູ.
ເພິ່ນຈະຖືກເອີ້ນວ່າເປັນພຣະບຸດຂອງພຣະ
ເຈົ້າອົງສູງສຸດ.
ພຣະອົງຈະຊົງຄອງຣາດຕະຫຼອດໄປເປັນນິດ.”



ມາຣີກໍປະຫຼາດໃຈຫຼາຍ ແລະກ່າວວ່າ,
"ເຫດການນີ້ຈະເກີດຂຶ້ນໄດ້ແນວໃດ
ເພາະຂ້ານ້ອຍຍັງບໍ່ໄດ້ຫຼັບນອນນຳຊາຍໃດ
ເລີຍ."
ທູດສະຫວັນຊິງກ່າວແກ່ນາງວ່າ
ບຸດນັ້ນຈະເປັນມາແຕ່ພຣະເຈົ້າ
ຊຶ່ງຈຳເປັນຕ້ອງມີພໍ່ທີ່ເປັນ
ມະນຸດ.



ຫຼັງຈາກນັ້ນ ທູດສະຫວັນກໍໄດ້ໄປຫາພີ່ນ້ອງຂອງນາງ
ມາຣີ ຄືນາງ ເອລີຊາເບັດ ເພື່ອບອກວ່ານາງກໍກຳລັງຈະ
ໃຫ້ກຳເນີດບຸດຊາຍຄືກັນ ເຖິງແມ່ນວ່ານາງຈະ
ອາຍຸຫຼາຍແລ້ວກໍຕາມ.
ອັນນີ້ກໍເປັນເຫດການອັດສະ
ຈັນດ້ວຍ. ຫຼັງຈາກນັ້ນບໍ່ດົນ,
ມາຣີຈຶ່ງໄດ້ໄປຢ້ຽມນາງ
ເອລີຊາເບດ.

ພວກເຂົາຕາງກໍພາກັນ
ສັນລະເສີນພຣະເຈົ້າ.



ນາງ ມາຣີ ໄດ້ຕົກລົງໝັ້ນໝາຍທີ່ຈະແຕ່ງງານກັບຊາຍຄົນໜຶ່ງທີ່ຊື່
ໂຢເຊບ. ຝ່າຍໂຢເຊບກໍເສຍ
ໃຈຫຼາຍພາຍຫຼັງທີ່ຮູ້ວ່າ ນາງ
ມາຣີ ໄດ້ຖືພາ.

ລາວຄິດວ່າຄົງແມ່ນຊາຍອື່ນ
ທີ່ເປັນພໍ່ຂອງເດັກ.



ທູດສະຫວັນຂອງພຣະເຈົ້າໄດ້ເຂົ້າຜັນໂຢເຊບ
ເພື່ອບອກລາວວ່າເດັກທີ່ຈະເກີດມານັ້ນແມ່ນພຣະບຸດຂອງພຣະເຈົ້າ
ແລະໄດ້ບອກໃຫ້ໂຢເຊບຊ່ອຍນາງ ມາຣີ
ລ້ຽງດູພຣະກຸມມານດ້ວຍ.



ໂຍເຊບໄວ້ວາງໃຈ ແລະເຊື່ອຟັງພຣະເຈົ້າ. ນອກນັ້ນ ຍັງເປັນການ
ປະຕິບັດຕາມກົດໝາຍຂອງບ້ານເມືອງດ້ວຍ, ...



... ເພາະຕອນນັ້ນມີກົດໝາຍສະບັບໃໝ່ອອກມາ ເຮັດໃຫ້ໂຢເຊບ ແລະນາງ ມາຣີ ຕ້ອງໄດ້ເດີນທາງໄປຈ່າຍພາສີທີ່ບ້ານເກີດເມືອງນອນ ຂອງຕົນຄື ເບດເລເຮມ.





ນາງ ມາຣີ ແມ່ນຢູ່ໃນຊ່ວງ
ຂອງເດືອນຄອງແລ້ວ ຄືໃກ້
ຈະຮອດກຳນົດໃຫ້ກຳເນີດ
ແກ່ພຣະກຸມມານແລ້ວ. ແຕ່
ໂຢເຊບບໍ່
ສາມາດຫາຫ້ອງພັກໄດ້.
ໂຮງແຮມທຸກ
ຫ້ອງເຕັມໝົດ.

ໃນທີ່ສຸດ ໂຢເຊບກໍພົບຄອກມ້າແຫ່ງໜຶ່ງ. ພຣະກຸມມານໄດ້ເກີດໃນທີ່ນັ້ນ. ມານດາຂອງພຣະອົງໄດ້ພັນພຣະອົງໄວ້ເທິງຮາງຫຍ້າ, ບ່ອນທີ່ພວກເຂົາໃຊ້

ເປັນບ່ອນໃຫ້ອາຫານແກ່ໂຕສັດ.



ໃກ້ໆນັ້ນ ມີພວກລ້ຽງແກະພວມນອນເຝົ້າຝູງແກະຂອງຕົນຢູ່. ທູດສະຫວັນຂອງພຣະເຈົ້າໄດ້ປະກົດ ແລະບອກພວກເຂົາຂ່າວອັນປະເສີດນີ້.



“ວັນນີ້ ພຣະຜູ້ຊົງໂຜດໃຫ້ພົ້ນອົງໜຶ່ງຄືພຣະຄຣິດເຈົ້າ
ໄດ້ມາບັງເກີດໃນເມືອງດາວິດສຳລັບເຈົ້າທັງຫຼາຍ.
ພວກເຈົ້າຈະພົບພຣະກຸມມານນອນໃນຮາງຫຍ້າ.”



ໃນທັນໃດນັ້ນ ກໍມີທູດສະຫວັນຫຼາຍອົງມາປາກົດ,
ກ່າວຮ້ອງສັນລະເສີນພຣະເຈົ້າວ່າ, ...



... “ພຣະລັດສະໝີຈົ່ງມີແກ່ພຣະເຈົ້າໃນທີ່ສູງສຸດ
ແລະທີ່ແຜ່ນດິນໂລກຈົ່ງມີສັນຕິສຸກ
ແກ່ມະນຸດທັງປວງທີ່ພຣະອົງຊົງຊອບພຣະໄທນັ້ນ.”





ພວກຜູ້ລ້ຽງແກະກໍຟ້າວພາກັນແລ່ນໄປທີ່ຄອກມ້າ.
ຫຼັງຈາກໄດ້ພົບກັບພຣະກຸມມານແລ້ວ
ພວກເຂົາກໍແລ່ນໄປບອກທຸກຄົນທີ່ຕົນເອງພົບເຫັນ ກ່ຽວກັບສິ່ງທີ່ທູດສະຫວັນໄດ້ກ່າວເຖິງເລື່ອງພຣະເຢຊູ.



ອີກສີ່ສິບວັນຕໍ່ມາ, ໂຢເຊບ ແລະມາຣີ ກໍໄດ້ພາພຣະກຸມມານເຢຊູໄປຍັງພຣະວິຫານໃນກຸງ

ເຢຣູຊາເລັມ. ໃນທີ່ນັ້ນມີຊາຍຄົນໜຶ່ງຊື່ ຊີໂມນ ແລະອີກຜູ້ໜຶ່ງຊື່ ນາງ ອານາ ຊຶ່ງເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ, ກໍໄດ້ກ່າວສັນລະເສີນພຣະເຈົ້າເມື່ອພວກເຂົາໄດ້ເຫັນພຣະກຸມມານ,



ທັງສອງຄົນຮູ້ຈັກວ່າ ພຣະເຢຊູຊົງ
ເປັນພຣະບຸດຂອງພຣະເຈົ້າ,
ພຣະຜູ້ຊົງໂຜດໃຫ້ພົ້ນທີ່
ສັນຍາວ່າຈະສະເດັດມານັ້ນ.
ໂຢເຊບໄດ້ຖວາຍນົກສອງໂຕ.
ອັນນີ້ແມ່ນເພິ່ນເຮັດ
ຕາມພຣະບັນຍັດຂອງພຣະເຈົ້າ
ທີ່ລະບຸໄວ້ສຳລັບຄົນທຸກຍາກ
ເມື່ອເຂົາເຈົ້າເອົາລູກນ້ອຍ
ມາຖວາຍແກ່ພຣະເຈົ້າ
ພວກເຂົາຕ້ອງນຳເອົາ
ນົກສອງໂຕມານຳ.



ຕໍ່ມາ,
ກໍ່ມີດາວພິເສດນຳໂຫລາ
ຈານຈາກພາກຕາເວັນ
ອອກຂອງປະເທດມາຍັງ
ກຸງເຢຣູຊາເລັມ.

ພວກເຂົາຖາມປະຊາຊົນມາເລື້ອຍວ່າ,
"ພຣະອົງຜູ້ທີ່ບັງເກີດມາເປັນກະສັດ
ຂອງຊາດຢິວນັ້ນ ຢູ່ທີ່ໃດ?
ພວກເຮົາປະສົງທີ່ຈະຂາບໄຫວ້ເພິ່ນ."

ກະສັດເຮໂຣດໄດ້ຍິນເລື່ອງພວກ
ໂຫ ລາຈານ. ບັນຫາກໍບັງເກີດ,
ເມື່ອພຣະອົງບອກພວກໂຫລາ
ຈານ
ວ່າໃຫ້ບອກຕົນທັນທີທີ່ພົບພຣະ
ກຸມມານນັ້ນ. ເຮໂຣດກ່າວວ່າ,
“ເຮົາກໍຢາກໄປຂາບໄຫວ້ເພິ່ນ
ຄືກັນກັນ.” ແຕ່ເຮໂຣດເວົ້າຕົວະ.
ເຮໂຣດຕ້ອງການຂ້າພຣະອົງເຢຊູ
ຖິ້ມເສຍ.



ດວງດາວນັ້ນໄດ້ນໍາໂຫລາຈານໄປຍັງບ່ອນທີ່ມາຣີ ແລະໂຢ
ເຊບ ພັກອາໄສຢູ່ກັບພຣະກຸມມານ.
ພວກເຂົາກໍພາກັນກົ້ມຂາບ
ແລະຖວາຍຂອງຂວັນອັນລໍາ◌້ຄ່າເຊັ່ນ
ເງິນຄໍາ
ແລະນໍາ◌້ຫອມ ແກ່ພຣະກຸມມານເຢຊູ.



ພຣະເຈົ້າໄດ້ເຂົ້າຝັນເຕືອນພວກໂຫ
ລາຈານໃຫ້ກັບໄປທາງອື່ນເສຍ. ຝ່າຍ
ເຮໂຣດໃຈຮ້າຍຫຼາຍ. ດ້ວຍຄວາມມຸ່ງ
ໝັ້ນທີ່ຈະຂ້າພຣະເຢຊູໃຫ້ໄດ້, ຜູ້
ປົກຄອງທີ່ຊົ່ວຮ້າຍນີ້ໄດ້ສັ່ງຂ້າ
ເດັກນ້ອຍຜູ້ຊາຍທຸກຄົນໃນເມືອງ
ເບດເລເຮັມ.





ແຕ່ເຮໂຣດບໍ່ສາມາດເຮັດຮ້າຍອັນ
ໃດແກ່ພຣະບຸດຂອງພຣະເຈົ້າໄດ້!

ໂຢເຊບໄດ້ຮັບຄຳເຕືອນທາງຄວາມ
ຝັນ, ເພິ່ນຈຶ່ງລຸກຂຶ້ນພາມາຣີ ແລະ
ໂຢເຊບອອກເດີນທາງໄປຍັງ
ປະເທດເອຢິບ.

ເມື່ອເຮໂຣດສິ້ນພຣະຊົນແລ້ວ
ໂຢເຊບກໍໄດ້ພາມາຣີ



ແລະພຣະກຸມມານເຢຊູກັບໄປຍັງປະເທດເອຢິບ.
ພວກເຂົາອາໃສຢູ່ໃນເມືອງນ້ອຍໆທີ່ມີຊື່ວ່າ
ນາຊາເຣັດ ໃກ້ກັບທະເລຄາລີເລ

# ພຣະກຳເນີດຂອງພຣະເຢຊູ

ເລື່ອງໜຶ່ງຈາກພຣະຄຳຂອງພຣະເຈົ້າ, ພຣະຄຳພີ,

ທີ່ສາມາດພົບໄດ້ໃນ

ມັດທາຍ ບົດທີ 1-2, ລູກາ ບົດທີ 1-2

“ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ.”
ເພງສັນລະເສີນ 119:130

# ຈົບບໍລິບູນ

36

60

ເລື່ອງລາວໃນພຣະຄໍາພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າຜູ້ວິເສດ
ຜູ້ທີ່ສ້າງພວກເຮົາ ແລະຢາກໃຫ້ພວກທ່ານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ ຊຶ່ງພຣະອົງເອີ້ນວ່າ ຜິດບາບ.
ບົດລົງໂທດຂອງຄວາມບາບຄືຄວາມຕາຍ. ແຕ່ພຣະເຈົ້າຊົງຮັກທ່ານຫຼາຍ
ຈົນໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍເປັນຄືນມາຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າທ່ານເຊື່ອໃນພຣະເຢຊູ
ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງຈະຊົງຍົກໂທດໃຫ້ແນ່ນອນ!
ພຣະອົງຈະສະເດັດມາປະທັບໃນຊີວິດຂອງທ່ານທັນທີ,
ແລະທ່ານຈະໄດ້ຢູ່ນໍາພຣະອົງຕະຫຼອດໄປເປັນນິດ.

ຖ້າທ່ານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້, ກໍໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບຂອງຂ້ານ້ອຍ
ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ. ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ, ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນໜຶ່ງຂ້ານ້ອຍຈະໄດ້ຢູ່ນໍາພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ວຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄໍາພີ ແລະສົນທະນານໍາພຣະເຈົ້າທຸກວັນ! ໂຢຮັນ 3:16